**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ

ແລະ ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ 3078/ສພກ

ນະຄອນຫຼວງວຽງຈັນ, ວັນທີ 26 ກຸມພາ 2021

# ຄຳແນະນຳ

## ສຳລັບຜູ້ທີ່ຈະເດີນທາງເຂົ້າ ສປປ ລາວ ໃນໄລຍະດຳເນີນມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດຂອງພະຍາດ COVID19

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020 ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19);
- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 111/ຫສນຍ, ລົງວັນທີ 01 ກຸມພາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງບໍລິສັດເພື່ອສະໜອງເຄື່ອງຕິດຕາມທາງດ້ານການແພດ ສະບັບເລກທີ 3092/ສພກ, ລົງວັນທີ 28 ທັນວາ 2020;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການທົດລອງນຳໃຊ້ອຸປະກອນຕິດຕາມການແພດ ແລະ ຂາຍປະກັນໄພ COVID19 ສຳລັບຄົນຕ່າງປະເທດທີ່ຈະເດີນທາງເຂົ້າມາ ສປປ ລາວ ສະບັບເລກທີ 0609/ສທ, ລົງວັນທີ 12 ກຸມພາ 2020.
- ອີງຕາມ ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ທີ່ກຳລັງລະບາດ ໃນບັນດາປະເທດພາກພື້ນ ແລະ ແຜ່ຂະຫຍາຍຫຼາຍປະເທດໃນໂລກ;

ເພື່ອສືບຕໍ່ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ການແຜ່ເຊື້ອຂອງພະຍາດ COVID-19 ຢູ່ ສປປ ລາວ, ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານທີ່ ມີຈຸດປະສົງຈະເດີນທາງເຂົ້າ ສປປ ລາວ ໃນໄລຍະນີ້ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນ ແລະ ມາດຕະການ ດັ່ງລຸ່ມນີ້:



Scanned with CamScanner

**I. ສຳລັບບຸກຄົນທົ່ວໄປ ທີ່ເດີນທາງມາຈາກຕ່າງປະເທດ ແລະ ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ເຂົ້າ ສປປ ລາວ ຈະຕ້ອງປະຕິບັດຕາມມາດຕະການດັ່ງນີ້ :**

1. ຕ້ອງມີໃບຢັ້ງຢືນການກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ພາຍໃນ 72 ຊົ່ວໂມງກ່ອນການເດີນທາງ;
2. ເມື່ອເຖິງ ສປປ ລາວ ຕ້ອງໄດ້ກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR, ໃສ່ອຸປະກອນຕິດຕາມການແພດ, ຊື້ປະກັນໄພ COVID-19 ທີ່ທາງຄະນະສະເພາະກິດກຳນົດໄວ້;
3. ຖ້າຜົນກວດບໍ່ພົບເຊື້ອ (RT-PCR ເປັນຜົນລົບ) ແມ່ນ ສືບຕໍ່ຈຳກັດບໍລິເວນໃນສະຖານທີ່ ທາງຄະນະສະເພາະກິດໄດ້ກຳນົດໄວ້ ຈົນຄົບກຳນົດ 14 ວັນ ພ້ອມທັງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ.

**II. ສຳລັບນັກການທູດ, ພະນັກງານອົງການຈັດຕັ້ງສາກົນ ທີ່ເປັນເຄືອຂ່າຍຂອງອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ ທີ່ລັດຖະບານລາວ ໄດ້ມີສັນຍາໃຫ້ເອກະສິດ ແລະ ສິດຄຸ້ມກັນທາງການທູດ ແລະ ສະມາຊິກຄອບຄົວ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດເຂົ້າມາ ສປປ ລາວ ຈະຕ້ອງປະຕິບັດຕາມມາດຕະການດັ່ງນີ້:**

1. ຕ້ອງມີໃບຢັ້ງຢືນການກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ພາຍໃນ 72 ຊົ່ວໂມງກ່ອນການເດີນທາງ;
2. ເມື່ອເຖິງ ສປປ ລາວ ຕ້ອງໄດ້ກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RTP-CR;
3. ຖ້າຜົນກວດບໍ່ພົບເຊື້ອ (RT-PCR ເປັນຜົນລົບ) ແມ່ນ ສືບຕໍ່ຈຳກັດບໍລິເວນໃນສະຖານທີ່ ທາງຄະນະສະເພາະກິດໄດ້ກຳນົດໄວ້ ຈົນຄົບກຳນົດ 14 ວັນ ພ້ອມທັງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ.

**III. ສິ່ງທີ່ຕ້ອງເອົາໃຈໃສ່**

1. ສຳລັບຄົນຕ່າງປະເທດ ຄ່າໃຊ້ຈ່າຍໃນລະຫວ່າງການຈຳກັດບໍລິເວນ, ຄ່າກວດວິເຄາະ, ຄ່າເຊົ່າອຸປະກອນຕິດຕາມການແພດ, ປະກັນໄພ COVID-19 (ສຳລັບຜູ້ບໍ່ມີປະກັນ) ຜູ້ກ່ຽວ ຫຼື ບໍລິສັດ, ອົງການທີ່ສະເໜີເອົາ ເຂົ້າມາຕ້ອງເປັນຜູ້ຮັບຜິດຊອບ ທັງໝົດ;
2. ສຳລັບຄົນຕ່າງປະເທດຖ້າກວດພົບການຕິດເຊື້ອ ພາຍຫຼັງເດີນທາງມາຮອດ ສປປ ລາວ, ບຸກຄົນດັ່ງກ່າວຕ້ອງຖືກນຳສົ່ງໄປແຍກປ່ຽວ ແລະ ປິ່ນປົວຢູ່ໂຮງໝໍທີ່ໄດ້ກຳນົດໄວ້, ປະກັນໄພ COVID-19 ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍປິ່ນປົວ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງ;
3. ສຳລັບໂຮງແຮມ, ສະຖານທີ່ຈຳກັດບໍລິເວນທີ່ຄະນະສະເພາະກິດໄດ້ກຳນົດໄວ້ ແມ່ນໃຫ້ເອົາໃຈໃສ່ໃນການກວດກາ, ຄຸ້ມຄອງ ຜູ້ມາຈຳກັດບໍລິເວນ ໃຫ້ປະຕິບັດຕາມມາດຕະການຢ່າງເຂັ້ມງວດ, ຖ້າຫາກມີຄວາມລະເລີຍຕໍ່ມາດຕະການ ທາງໂຮງແຮມ ແລະ ສະຖານທີ່ຈຳກັດບໍລິເວນດັ່ງກ່າວ ເຮັດໃຫ້ຜູ້ມາຈຳກັດບໍລິເວນ ນຳເອົາເຊື້ອພະຍາດ ໄປແຜ່ລະບາດສູ່ບຸກຄົນອື່ນ, ໂຮງແຮມ, ສະຖານທີ່ຈຳກັດບໍລິເວນ,



Scanned with CamScanner

ຜູ້ກ່ຽວທີ່ລະເມີດ ແລະ ການຈັດຕັ້ງທີ່ສະເໜີເອົາເຂົ້າມາ ຈະຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍ ແລະ ຜົນກະທົບທັງໝົດທີ່ເກີດຂຶ້ນ.

4. ມອບໃຫ້ຄະນະສະເພາະກິດຂັ້ນທ້ອງຖິ່ນ ເຮັດບົດບັນທຶກກັບບັນດາໂຮງແຮມ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 3.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດດ້ວຍ.

**ລັດຖະມົນຕີກະຊວງສາທາລະນະສຸກ,**
**ຮອງຫົວໜ້າຄະນະສະເພາະກິດ**

ຮສ.ດຣ.ບຸນກອງ ສີຫາວົງ



Scanned with CamScanner